## ແບບສຳຫຼວດຜົນໄດ້ຮັບຂອງຄອບຄົວ
## ສະບັບແກ້ໄຂ
### ພາກ A: ຜົນໄດ້ຮັບຂອງຄອບຄົວ

**ເລກປະຈຳຕົວດ້ານການສຶກສາ (MARSS) ຂອງເດັກ:** ___ ___ ___ ___ ___ ___ ___ ___ ___ ___ ___ ___ ___

**ຄຳແນະນຳ:** ພາກ A ຂອງແບບສຳຫຼວດກ່ຽວກັບຜົນໄດ້ຮັບຂອງຄອບຄົວ (Family Outcomes Survey) ເນັ້ນໃສ່ວິທີຕ່າງໆ ທີ່ທ່ານນຳໃຊ້ເພື່ອສະໜັບສະໜູນຄວາມຕ້ອງການຂອງລູກທ່ານ. ສຳລັບແຕ່ລະຂໍ້ຄວາມຂ້າງລຸ່ມ, ກະລຸນາເລືອກຂໍ້ທີ່ບັນຍາຍເຖິງຄອບຄົວຂອງທ່ານໃນຂະນະນີ້ໄດ້ດີທີ່ສຸດ: ບໍ່ແມ່ນເລີຍ, ເລັກນ້ອຍ, ບາງສ່ວນ, ເກືອບທັງໝົດ, ທັງໝົດ.

| | | ບໍ່ແມ່ນເລີຍ | ເລັກນ້ອຍ | ບາງສ່ວນ | ເກືອບທັງໝົດ | ທັງໝົດ |
|---|---|---|---|---|---|---|
| **ຜົນໄດ້ຮັບ 1: ການເຂົ້າໃຈເຖິງຈຸດແຂງ, ຄວາມຕ້ອງການ, ແລະ ຄວາມສາມາດຂອງລູກທ່ານ** | | | | | | |
| 1. | ພວກເຮົາຮູ້ບາດກ້າວຕໍ່ໄປສຳລັບການເຕີບໃຫຍ່ ແລະ ການຮຽນຮູ້ຂອງລູກພວກເຮົາ. | | | | | |
| 2. | ພວກເຮົາເຂົ້າໃຈເຖິງຈຸດແຂງ ແລະ ຄວາມສາມາດຂອງລູກພວກເຮົາ. | | | | | |
| 3. | ພວກເຮົາເຂົ້າໃຈຄວາມຫຼ້າຊ້າ ແລະ/ຫຼື ຄວາມຕ້ອງການຈຳເປັນຂອງລູກພວກເຮົາ. | | | | | |
| 4. | ພວກເຮົາສາມາດບອກໄດ້ວ່າເມື່ອໃດທີ່ລູກພວກເຮົາກຳລັງກ້າວໜ້າ. | | | | | |
| **ຜົນໄດ້ຮັບ 2: ການຮູ້ຈັກສິດທິຂອງທ່ານ ແລະການຊ່ວຍເຫຼືອເພື່ອລູກຂອງທ່ານ** | | | | | | |
| 5. | ພວກເຮົາສາມາດຊອກຫາ ແລະນຳໃຊ້ການບໍລິການ ແລະໂຄງການຕ່າງໆ ທີ່ມີໃຫ້ແກ່ພວກເຮົາ. | | | | | |
| 6. | ພວກເຮົາຮູ້ຈັກສິດທິຂອງພວກເຮົາທີ່ກ່ຽວຂ້ອງກັບຄວາມຕ້ອງການພິເສດຂອງລູກພວກເຮົາ. | | | | | |
| 7. | ພວກເຮົາຮູ້ຈັກວ່າຈະຕິດຕໍ່ໃຜ ແລະຕ້ອງເຮັດແນວໃດເມື່ອພວກເຮົາມີຄຳຖາມ ຫຼືມີຄວາມເປັນຫ່ວງ. | | | | | |
| 8. | ພວກເຮົາຮູ້ວ່າທາງເລືອກອັນໃດທີ່ມີໃຫ້ ເມື່ອລູກຂອງພວກເຮົາອອກຈາກໂຄງການ. | | | | | |
| 9. | ພວກເຮົາຮູ້ສຶກສະດວກໃຈທີ່ຈະຂໍຮັບການບໍລິການ ແລະການຊ່ວຍເຫຼືອຕ່າງໆ ທີ່ລູກແລະຄອບຄົວຂອງພວກເຮົາຕ້ອງການ. | | | | | |
| **ຜົນໄດ້ຮັບ 3: ການຊ່ວຍໃຫ້ລູກຂອງທ່ານພັດທະນາ ແລະຮຽນຮູ້** | | | | | | |
| 10. | ພວກເຮົາສາມາດຊ່ວຍໃຫ້ລູກຂອງພວກເຮົາເຂົ້າກັນໄດ້ດີກັບຜູ້ອື່ນ. | | | | | |
| 11. | ພວກເຮົາສາມາດຊ່ວຍລູກຂອງພວກເຮົາໃຫ້ຮຽນຮູ້ທັກສະຄວາມຊຳນານໃໝ່ໆ. | | | | | |
| 12. | ພວກເຮົາສາມາດຊ່ວຍໃຫ້ລູກຂອງພວກເຮົາ ສາມາດຈັດການກັບຄວາມຕ້ອງການຂອງເຂົາ/ລາວເອງໄດ້. | | | | | |
| 13. | ພວກເຮົາສາມາດເຮັດວຽກກ່ຽວກັບເປົ້າໝາຍຂອງລູກພວກເຮົາໃນລະຫວ່າງກິດຈະວັດປະຈຳວັນໄດ້. | | | | | |
| **ຜົນໄດ້ຮັບ 4: ການມີບັນດາລະບົບສະໜັບສະໜູນ** | | | | | | |
| 14. | ພວກເຮົາຮູ້ສຶກສະດວກໃຈໃນການລົມກັບຄອບຄົວ ແລະ ໝູ່ເພື່ອນກ່ຽວກັບຄວາມຕ້ອງການຂອງລູກ. | | | | | |

© 2010. ສະບັບ: 2-5-10.
ໄດ້ມີການອະນຸຍາດໃຫ້ຜະລິດແບບສຳຫຼວດນີ້ຊ້ຳໄດ້ອີກເພື່ອການນຳໃຊ້ຂອງຣັຖແລະໂຄງການໃນທ້ອງຖິ່ນ. ເມື່ອທຳການຜະລິດຊ້ຳ, ກະລຸນາລະບຸວ່າ "ໄດ້ຮັບການພັດທະນາໂດຍ Early Childhood Outcomes Center (ສູນດູແລຜົນໄດ້ຮັບຂອງວັຍເດັກເລີ່ມຕົ້ນ) ພ້ອມດ້ວຍການສະໜັບສະໜູນຈາກຫ້ອງການດູແລໂຄງການການສຶກສາພິເສດ, ກະຊວງສຶກສາທິການແຫ່ງສະຫະຣັຖ." ກະລຸນາຕິດຕໍ່ staff@the-ECO-center.org ຖ້າຫາກທ່ານຕ້ອງການນຳໃຊ້ ຫຼື ດັດແປງແບບສຳຫຼວດນີ້.

ແບບສຳຫຼວດຜົນໄດ້ຮັບຂອງຄອບຄົວ
ສະບັບແກ້ໄຂ
ພາກ A: ຜົນໄດ້ຮັບຂອງຄອບຄົວ

| | | | | | | |
|---|---|---|---|---|---|---|
| 15. | ພວກເຮົາມີເພື່ອນ ຫຼື ສະມາຊິກໃນຄອບຄົວທີ່ຮັບຟັງແລະໃສ່ໃຈດູແລ. | ○ | ○ | ○ | ○ | ○ |
| 16. | ພວກເຮົາສາມາດລົມກັບຄອບຄົວອື່ນໆ ທີ່ມີລູກທີ່ມີຄວາມຕ້ອງການຄ້າຍຄືກັນ. | ○ | ○ | ○ | ○ | ○ |
| 17. | ພວກເຮົາມີເພື່ອນ ຫຼື ສະມາຊິກໃນຄອບຄົວທີ່ພວກເຮົາສາມາດເພິ່ງພາໄດ້ເມື່ອພວກເຮົາຕ້ອງການຄວາມຊ່ວຍເຫຼືອ. | ○ | ○ | ○ | ○ | ○ |
| 18. | ຂ້າພະເຈົ້າສາມາດຈັດການກັບຄວາມຕ້ອງການຂອງຕົນເອງໄດ້ ແລະ ເຮັດສິ່ງຕ່າງໆ ທີ່ຂ້າພະເຈົ້າມັກ. | ○ | ○ | ○ | ○ | ○ |
| **ຜົນໄດ້ຮັບ 5: ການເຂົ້າເຖິງຊຸມຊົນ** | | | | | | |
| 19. | ລູກຂອງເຮົາປະກອບສ່ວນໃນກິດຈະກຳດ້ານສັງຄົມ, ການບັນເທີງສັງສັນ, ຫຼື ກິດຈະກຳທາງສາສະໜາ ທີ່ພວກເຮົາຕ້ອງການ. | ○ | ○ | ○ | ○ | ○ |
| 20. | ພວກເຮົາສາມາດເຮັດສິ່ງຕ່າງໆ ທີ່ພວກເຮົາມັກນຳກັນໃນຖານະເປັນຄອບຄົວດີວກັນ. | ○ | ○ | ○ | ○ | ○ |
| 21. | ພວກເຮົາໄດ້ຮັບການສະໜອງຕອບສຳລັບຄວາມຕ້ອງການດ້ານການປິ່ນປົວ ແລະດ້ານການປິ່ນປົວແຂ້ວ. | ○ | ○ | ○ | ○ | ○ |
| 22. | ພວກເຮົາໄດ້ຮັບການສະໜອງຕອບສຳລັບຄວາມຕ້ອງການດ້ານການເບິ່ງແຍງເດັກ. | ○ | ○ | ○ | ○ | ○ |
| 23. | ພວກເຮົາໄດ້ຮັບການສະໜອງຕອບສຳລັບຄວາມຕ້ອງການດ້ານພາຫະນະເດີນທາງ. | ○ | ○ | ○ | ○ | ○ |
| 24. | ພວກເຮົາໄດ້ຮັບການສະໜອງຕອບສຳລັບຄວາມຕ້ອງການດ້ານອາຫານ, ເຄື່ອງນຸ່ງ, ແລະທີ່ພັກອາໄສ. | ○ | ○ | ○ | ○ | ○ |

**ກະລຸນາພິກໄປໜ້າຫຼັງເພື່ອຕອບແບບສຳຫຼວດໃຫ້ຄົບຖ້ວນ.**

© 2010. ສະບັບ: 2-5-10.
ໄດ້ມີການອະນຸຍາດໃຫ້ຜະລິດແບບສຳຫຼວດນີ້ຊ້ຳໄດ້ອີກເພື່ອການນຳໃຊ້ຂອງຣັຖແລະໂຄງການໃນທ້ອງຖິ່ນ. ເມື່ອທຳການຜະລິດຊ້ຳ, ກະລຸນາລະບຸວ່າ "ໄດ້ຮັບການພັດທະນາໂດຍ Early Childhood Outcomes Center (ສູນດູແລຜົນໄດ້ຮັບຂອງເດັກເລີ່ມຕົ້ນ) ພ້ອມດ້ວຍການສະໜູບສະໜູນຈາກຫ້ອງການດູແລໂຄງການການສຶກສາພິເສດ, ກະຊວງສຶກສາທິການແຫ່ງສະຫະຣັຖ." ກະລຸນາຕິດຕໍ່ staff@the-ECO-center.org ຖ້າຫາກທ່ານຕ້ອງການນຳໃຊ້ ຫຼື ດັດແປງແບບສຳຫຼວດນີ້.

# ແບບສຳຫຼວດຜົນໄດ້ຮັບຂອງຄອບຄົວ

## ສະບັບແກ້ໄຂໃໝ່

### ພາກ B: ຜົນປະໂຫຍດຂອງການແຊກແຊງຊ່ວຍເຫຼືອແຕ່ຫົວທີ

**ຄຳແນະນຳ:** ພາກ B ຂອງແບບສຳຫຼວດກ່ຽວກັບຜົນໄດ້ມາຂອງຄອບຄົວ ເນັ້ນໃສ່ຜົນປະໂຫຍດຂອງ ການແຊກແຊງຊ່ວຍເຫຼືອແຕ່ຫົວທີ. ສຳລັບຄຳຖາມແຕ່ລະຂໍ້ຂ້າງລຸ່ມນີ້, ກະລຸນາເລືອກວ່າ ວິທີການແຊກແຊງຊ່ວຍເຫຼືອແຕ່ຫົວທີມີປະໂຫຍດຕໍ່ທ່ານ ແລະຄອບຄົວຂອງທ່ານຫຼາຍປານໃດໃນຊ່ວງປີທີ່ຜ່ານມາ: ບໍ່ມີປະໂຫຍດເລີຍ, ມີປະໂຫຍດເລັກນ້ອຍ, ມີປະໂຫຍດບາງສ່ວນ, ມີປະໂຫຍດຫຼາຍ, ຫຼື ມີປະໂຫຍດຢ່າງຍິ່ງ.

| | | ບໍ່ມີປະໂຫຍດເລີຍ | ມີປະໂຫຍດເລັກນ້ອຍ | ມີປະໂຫຍດບາງສ່ວນ | ມີປະໂຫຍດຫຼາຍ | ມີປະໂຫຍດຢ່າງຍິ່ງ |
|---|---|---|---|---|---|---|
| **ການຮູ້ຈັກສິດທິຂອງທ່ານ** | | | | | | |
| **ການແຊກແຊງຊ່ວຍເຫຼືອແຕ່ຫົວທີມີປະໂຫຍດຫຼາຍປານໃດໃນການ...** | | | | | | |
| 1. | ໃຫ້ຂໍ້ມູນທີ່ເປັນປະໂຫຍດກ່ຽວກັບການບໍລິການ ແລະ ການສະໜັບສະໜູນສຳລັບທ່ານແລະລູກຂອງທ່ານ? | ○ | ○ | ○ | ○ | ○ |
| 2. | ໃຫ້ຂໍ້ມູນທີ່ເປັນປະໂຫຍດກ່ຽວກັບສິດທິຂອງທ່ານທີ່ກ່ຽວຂ້ອງກັບຄວາມຕ້ອງການພິເສດຂອງລູກທ່ານ? | ○ | ○ | ○ | ○ | ○ |
| 3. | ໃຫ້ຂໍ້ມູນທີ່ເປັນປະໂຫຍດກ່ຽວກັບບຸກຄົນທີ່ທ່ານຄວນຕິດຕໍ່ເມື່ອທ່ານມີຄຳຖາມ ຫຼື ມີຄວາມເປັນຫ່ວງ? | ○ | ○ | ○ | ○ | ○ |
| 4. | ໃຫ້ຂໍ້ມູນທີ່ເປັນປະໂຫຍດກ່ຽວກັບທາງເລືອກອື່ນທີ່ມີໃຫ້ໃນເມື່ອລູກຂອງທ່ານອອກຈາກໂຄງການ? | ○ | ○ | ○ | ○ | ○ |
| 5. | ອະທິບາຍເຖິງສິດທິຂອງທ່ານໃນວິທີຕ່າງໆ ທີ່ເຮັດໃຫ້ທ່ານເຂົ້າໃຈງ່າຍ? | ○ | ○ | ○ | ○ | ○ |
| **ການສື່ສານເຖິງຄວາມຕ້ອງການຂອງລູກທ່ານ** | | | | | | |
| **ການແຊກແຊງຊ່ວຍເຫຼືອແຕ່ຫົວທີມີປະໂຫຍດຫຼາຍປານໃດໃນການ...** | | | | | | |
| 6. | ໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ທ່ານກ່ຽວກັບຄວາມຫລ້າຊ້າ ຫຼື ຄວາມຕ້ອງການຂອງລູກທ່ານ? | ○ | ○ | ○ | ○ | ○ |
| 7. | ຟັງທ່ານ ແລະ ເຄົາລົບຕໍ່ການເລືອກຂອງທ່ານ? | ○ | ○ | ○ | ○ | ○ |
| 8. | ເຊື່ອມຕໍ່ທ່ານໄປຮັບການບໍລິການອື່ນໆ ຫຼື ໄປຫາບຸກຄົນອື່ນທີ່ສາມາດຊ່ວຍເຫຼືອລູກ ແລະ ຄອບຄົວຂອງທ່ານໄດ້? | ○ | ○ | ○ | ○ | ○ |
| 9. | ລົມກັບທ່ານກ່ຽວກັບລູກຂອງທ່ານ ແລະ ຈຸດແຂງ ແລະ ຄວາມຕ້ອງການຂອງຄອບຄົວ? | ○ | ○ | ○ | ○ | ○ |
| 10. | ລົມກັບທ່ານກ່ຽວກັບສິ່ງທີ່ທ່ານຄິດວ່າມັນສຳຄັນສຳລັບລູກ ແລະ ຄອບຄົວຂອງທ່ານ? | ○ | ○ | ○ | ○ | ○ |
| 11. | ພັດທະນາຄວາມສຳພັນທີ່ດີກັບທ່ານ ແລະ ຄອບຄົວຂອງທ່ານ? | ○ | ○ | ○ | ○ | ○ |
| **ການຊ່ວຍໃຫ້ລູກຂອງທ່ານພັດທະນາ ແລະ ຮຽນຮູ້** | | | | | | |

© 2010. ສະບັບ: 2-5-10.
ໄດ້ມີການອະນຸຍາດໃຫ້ຜະລິດແບບສຳຫຼວດນີ້ຊ້ຳໄດ້ອີກເພື່ອການນຳໃຊ້ຂອງຣັຖແລະໂຄງການໃນທ້ອງຖິ່ນ. ເມື່ອທຳການຜະລິດຊ້ຳ, ກະລຸນາລະບຸວ່າ "ໄດ້ຮັບການພັດທະນາໂດຍ Early Childhood Outcomes Center (ສູນດູແລຜົນໄດ້ຮັບຂອງເດັກເລີ່ມຕົ້ນ) ພ້ອມດ້ວຍການສະໜູບສະໜູນຈາກຫ້ອງການດູແລໂຄງການການສຶກສາພິເສດ, ກະຊວງສຶກສາທິການແຫ່ງສະຫະຣັຖ." ກະລຸນາຕິດຕໍ່ staff@the-ECO-center.org ຖ້າຫາກທ່ານຕ້ອງການນຳໃຊ້ ຫຼື ດັດແປງແບບສຳຫຼວດນີ້.

## ແບບສຳຫຼວດຜົນໄດ້ຮັບຂອງຄອບຄົວ
## ສະບັບແກ້ໄຂໃໝ່

ພາກ B: ຜົນປະໂຫຍດຂອງການແຊກແຊງຊ່ວຍເຫຼືອແຕ່ຫົວທີ

| **ການແຊກແຊງຊ່ວຍເຫຼືອແຕ່ຫົວທີມີປະໂຫຍດຫຼາຍປານໃດໃນການ...** | | | | | |
|---|---|---|---|---|---|
| 12. ໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ທ່ານກ່ຽວກັບວິທີຊ່ວຍໃຫ້ລູກຂອງທ່ານເຂົ້າກັນໄດ້ກັບຜູ້ອື່ນ? | ○ | ○ | ○ | ○ | ○ |
| 13. ໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ທ່ານກ່ຽວກັບວິທີຊ່ວຍໃຫ້ລູກຂອງທ່ານຮຽນຮູ້ທັກສະຄວາມຊຳນານໃໝ່ໆ? | ○ | ○ | ○ | ○ | ○ |
| 14. ໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ທ່ານກ່ຽວກັບວິທີການຊ່ວຍໃຫ້ລູກຂອງທ່ານສາມາດຈັດການຄວາມຕ້ອງການຂອງເຂົາ/ລາວເອງໄດ້? | ○ | ○ | ○ | ○ | ○ |
| 15. ຊອກຫາສິ່ງຕ່າງໆທີ່ທ່ານເຮັດທີ່ຊ່ວຍໃຫ້ລູກຂອງທ່ານຮຽນຮູ້ແລະເຕີບໃຫຍ່? | ○ | ○ | ○ | ○ | ○ |
| 16. ແບ່ງປັນຄວາມຄິດກ່ຽວກັບວິທີການໃຫ້ລູກຂອງທ່ານປະກອບສ່ວນໃນກິດຈະວັດປະຈຳວັນຕ່າງໆ? | ○ | ○ | ○ | ○ | ○ |
| 17. ເຮັດວຽກກັບທ່ານເພື່ອໃຫ້ຮູ້ວ່າເມື່ອໃດທີ່ລູກຂອງທ່ານມີຄວາມກ້າວໜ້າ? | ○ | ○ | ○ | ○ | ○ |

ຂໍຂອບໃຈສຳລັບການຕອບແບບສຳຫຼວດຜົນໄດ້ຮັບຂອງຄອບຄົວແຫ່ງມິນນີໂຊຕາ.

ກະລຸນາເອົາແບບສຳຫຼວດໃສ່ໃນຊອງຈົດໝາຍ ແລະສົ່ງໄປທີ່:

Minnesota Family Outcome Survey
Minnesota Department of Education
1500 Highway 36 West
Roseville, MN 55113

© 2010. ສະບັບ: 2-5-10.
ໄດ້ມີການອະນຸຍາດໃຫ້ຜະລິດແບບສຳຫຼວດນີ້ຊ້ຳໄດ້ອີກເພື່ອການນຳໃຊ້ຂອງຣັຖແລະໂຄງການໃນທ້ອງຖິ່ນ. ເມື່ອທຳການຜະລິດຊ້ຳ, ກະລຸນາລະບຸວ່າ "ໄດ້ຮັບການພັດທະນາໂດຍ Early Childhood Outcomes Center (ສູນດູແລຜົນໄດ້ຮັບຂອງວັຍເດັກເລີ້ມຕົ້ນ) ພ້ອມດ້ວຍການສະໜັບສະໜູນຈາກຫ້ອງການດູແລໂຄງການການສຶກສາພິເສດ, ກະຊວງສຶກສາທິການແຫ່ງສະຫະຣັຖ." ກະລຸນາຕິດຕໍ່ staff@the-ECO-center.org ຖ້າຫາກທ່ານຕ້ອງການນຳໃຊ້ ຫຼື ດັດແປງແບບສຳຫຼວດນີ້.